IOWA READING RESEARCH CENTER

Student Reading Success Through Research and Collaboration

# ການຮຽນພາສາອັງກິດກັບລູກຂອງທ່ານ ແລະ ໄວໜຸ່ມ: ການໃຊ້ຕາຕະລາງວຽກເຮືອນເພື່ອຝຶກຝົນຄວາມຊໍານານໂດຍລວມ



ເວລາເຮັດວຽກເຮືອນຍັງສາມາດເວລາທີ່ດີຫຼາຍໃນການຝຶກຝົນທັກສະການເວົ້າພາສາ ໂດຍລົມກ່ຽວກັບຄົນທີ່ຈະເຮັດວຽກເຮືອນ ແລະ ເມື່ອໃດຈະເຮັດ. ໃຊ້ຕາຕະລາງວຽກເຮືອນເພື່ອສ້າງບົດສົນທະນາຂອງທ່ານ.

**ໂດຍ** Nicole DeSalle, ຜູ້ປະສານງານການຂຽນ, ສູນວິໄຈການອ່ານແຫ່ງລັດໄອໂອວາ

ເຜີຍແຜ່ໃນ: ວັນທີ 29 ມີນາ 2022

*ໝາຍເຫດຈາກບັນນາທິການ:*

*ການຮຽນຮູ້ໄປພ້ອມກັນສາມາດພັດທະນາທັກສະດ້ານພາສາອັງກິດຂອງລູກຂອງທ່ານ ແລະ ໄວໜຸ່ມ ພ້ອມທັງທັກສະຂອງທ່ານເອງ.*

*ໂພສທ໌ນີ້ແມ່ນເປັນສ່ວນໜຶ່ງຂອງ ຊີຣີການຮຽນຮູ້ຕໍ່ເນື່ອງ ເຊິ່ງຖືກອອກແບບມາເພື່ອຊ່ວຍໃຫ້ຜູ້ດູແລເບິ່ງແຍງທີ່ເປັນຜູ້ຮຽນຮູ້ພາສາອັງກິດຄົ້ນພົບໂອກາດການຮຽນຮູ້ພາສາອັງກິດສໍາລັບຄອບຄົວໃນຊີວິດປະຈໍາວັນຂອງພວກເຂົາ.*

ການຝຶກຝົນພາສາອັງກິດໃນຂະນະທີ່ກໍາລັງເຮັດວຽກເຮືອນຢູ່ໃນເຮືອນຂອງທ່ານມີວິທີການທີ່ດີຫຼາຍທີ່ທ່ານ ແລະ ລູກຂອງທ່ານ ຫຼື ໄວໜຸ່ມຈະສາມາດຮຽນຮູ້ໄດ້. ເພາະວຽກເຮືອນເປັນສ່ວນໜຶ່ງໃນກິດຈະກໍາປະຈໍາວັນ ຫຼື ປະຈໍາອາທິດ, ສະມາຊິກໃນຄອບຄົວມີໂອກາດຫຼາຍທີ່ຈະຝຶກຝົນຄໍາສັບ ແລະ ໂຄງສ້າງປະໂຫຍກ ເຊິ່ງອາດພັດທະນາຄວາມຊໍານານໂດຍລວມໃນດ້ານພາສາອັງກິດຂອງພວກເຂົາ. ສ່ວນໃຫຍ່ແລ້ວ ຂະບວນການຕັດສິນໃຈວ່າຈະເຮັດວຽກເຮືອນອັນໃດໃຫ້ສໍາເລັດ, ເມື່ອໃດຈະເຮັດພວກມັນໃຫ້ສໍາເລັດ ແລະ ການມອບໝາຍວຽກເຮືອນໃຫ້ສະມາຊິກໃນຄອບຄົວເປັນຕົວຢ່າງຂອງການແກ້ບັນຫາ. ການວິໄຈໄດ້ສະແດງໃຫ້ເຫັນວ່າ ເມື່ອຜູ້ຮຽນຮູ້ພາສາອັງກິດເຮັດວຽກຮ່ວມກັນເພື່ອແກ້ໄຂບັນຫາ, ພວກເຂົາຈະໃຫ້ຄວາມສົນໃຈຢ່າງຮອບຄອບຂຶ້ນກັບໂຄງສ້າງຂອງພາສາ ເພື່ອວ່າພວກເຂົາຈະສາມາດອະທິບາຍຄວາມໝາຍຂອງພວກເຂົາໃຫ້ຖືກຕ້ອງ ແລະ ຊັດເຈນເທົ່າທີ່ຈະເປັນໄດ້ (Kim, 2008).

---

## ການສ້າງຄວາມຮູ້ເບື້ອງຫຼັງຮ່ວມກັນ

ສໍາລັບຜູ້ຮຽນຮູ້ພາສາອັງກິດ, ຂໍ້ມູນນີ້ຈະເປັນປະໂຫຍດເມື່ອທ່ານຮູ້ກ່ອນທີ່ຈະເລີ່ມຕົ້ນກິດຈະກໍາໃນໂພສທ໌ນີ້.

*Chord (ວຽກເຮືອນ)* ແມ່ນໜ້າວຽກທີ່ທ່ານເຮັດໃນເຮືອນ. ວຽກເຮືອນບາງຢ່າງແມ່ນຈະເຮັດທຸກມື້. ວຽກເຮືອນບາງຢ່າງກໍເຮັດທຸກອາທິດ.

ຂ້າງລຸ່ມແມ່ນຕົວຢ່າງບາງອັນຂອງວຽກເຮືອນປົກກະຕິ:

- Clean your room (ມ້ຽນຫ້ອງຂອງທ່ານ)
- Make your bed (ຈັດຕຽງຂອງທ່ານ)
- Pick up/put away/hang up your clothes (ເກັບມ້ຽນ/ເກັບໄປຊັກ/ຫ້ອຍເສື້ອຜ້າຂອງທ່ານ)
- Wash the dishes (ລ້າງຖ້ວຍ)
- Wash the car (ລ້າງລົດ)
- Mow the lawn/cut the grass (ຖາງເດີ່ນ/ຕັດຫຍ້າ)
- Pick up toys (ເກັບມ້ຽນຂອງຫຼິ້ນ)
- Prepare/cook dinner (ກະກຽມ/ຄົວກິນແລງ)

- Set the table (ຈັດໂຕະ)
- Clear the table (ມ້ຽນໂຕະ)
- Wash the dishes (ລ້າງຖ້ວຍ)
- Clean out the refrigerator or freezer (ອະນາໄມຕູ້ເຢັນ ຫຼື ຕູ້ແຊ່ແຂງ)
- Clean the shower or tub (ອະນາໄມຝັກບົວ ຫຼື ອ່າງອາບນໍ້າ)
- Wash the clothes (ຊັກເສື້ອຜ້າ)
- Dry the clothes (ຕາກເສື້ອຜ້າ)
- Put away the clothes (ເກັບໄປເສື້ອຜ້າໄປຊັກ)
- Mop the floors (ຖູພື້ນ)
- Vacuum the carpets/rugs (ດູດຝຸ່ນຈາກພົມ/ຜ້າຮອງພື້ນ)
- Rake the leaves in fall (ກອດໃບໄມ້ໃນລະດູໃບໄມ້ລົ່ນ)
- Shovel the snow in winter (ກອດຫິມະໃນລະດູໜາວ)

---

ຕາຕະລາງວຽກເຮືອນແມ່ນວິທີການຈັດການໜ້າວຽກໃນຄົວເຮືອນເຊິ່ງຈຳເປັນຕ້ອງເຮັດໃຫ້ສຳເລັດ. ທ່ານສາມາດສ້າງຕາຕະລາງວຽກເຮືອນທີ່ສະແດງມື້ ຫຼື ມື້ໃນອາທິດທີ່ຈຳເປັນຕ້ອງເຮັດວຽກເຮືອນໃຫ້ສຳເລັດ. ທ່ານຍັງສາມາດລະບຸວ່າສະມາຊິກຄົນໃດໃນຄອບຄົວທີ່ຮັບຜິດຊອບສຳລັບການເຮັດວຽກເຮືອນ (ເບິ່ງ **ແຫຼ່ງຊ່ວຍເຫຼືອເສີມສຳລັບຄອບຄົວ**

ສຳລັບແມ່ແບບຕາຕະລາງວຽກເຮືອນ).

ທ່ານສາມາດຖາມຄຳຖາມດັ່ງຕໍ່ໄປນີ້ກັບລູກຂອງທ່ານ ຫຼື ໄວໜຸ່ມເປັນພາສາອັງກິດ ຫຼື ເປັນພາສາບ້ານເກີດຂອງທ່ານ:

- Why is it important for everyone in a family to help with chores? (ເປັນຫຍັງມັນຈຶ່ງສຳຄັນສຳລັບທຸກຄົນໃນຄອບຄົວທີ່ຈະຊ່ວຍວຽກເຮືອນ?)
- Which chores get done every day? Which chores get done each week? (ວຽກເຮືອນອັນໃດຕ້ອງເຮັດທຸກມື້? ວຽກເຮືອນອັນໃດຕ້ອງເຮັດໃຫ້ທຸກອາທິດ?)

- What chore do you think you are good at? Which is your least favorite chore? (ທ່ານຄິດວ່າທ່ານເຮັດວຽກເຮືອນໃດເກັ່ງ? ອັນໃດຄືວຽກເຮືອນທີ່ທ່ານມັກໜ້ອຍທີ່ສຸດ?)

ທ່ານອາດເລືອກທີ່ຈະເບິ່ງຄຳຖາມບາງຂໍ້ ຫຼື ທັງໝົດຄືນໃໝ່ກັບລູກຂອງທ່ານ ແລະ ໄວໜຸ່ມ ເມື່ອທ່ານສ້າງ ແລະ ໃຊ້ຕາຕະລາງວຽກເຮືອນຂອງທ່ານ.

## ການສ້າງທັກສະດ້ານພາສາອັງກິດຮ່ວມກັນ: ການໃຊ້ຕາຕະລາງວຽກເຮືອນເພື່ອຝຶກຝົນພາສາອັງກິດ

### ສ້າງຕາຕະລາງວຽກເຮືອນ

ປະຕິບັດຕາມຂັ້ນຕອນເຫຼົ່ານີ້ເພື່ອສ້າງຕາຕະລາງວຽກເຮືອນຄືກັບຕາຕະລາງຕົວຢ່າງຂ້າງລຸ່ມ.

- ໃນຖັນທຳອິດ, ໃຫ້ລະບຸວຽກເຮືອນທີ່ແຕກຕ່າງກັນເຊິ່ງຈຳເປັນຕ້ອງເຮັດໃຫ້ສຳເລັດ.
- ໃນແຖວເທິງ, ໃຫ້ຂຽນແຕ່ລະມື້ໃນອາທິດ.
- ສົນທະນາກັບລູກຂອງທ່ານ ແລະ ໄວໜຸ່ມກ່ຽວກັບວຽກເຮືອນທີ່ສະມາຊິກແຕ່ລະຄົນໃນຄອບຄົວຈະເຮັດສຳລັບອາທິດນັ້ນ. ໃຫ້ຂຽນຊື່ຂອງພວກເຂົາຂ້າງໆວຽກເຮືອນແຕ່ລະຢ່າງ ແລະ ກ້ອງມື້ຂອງອາທິດ (ຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ນີ້ໃນຂ້າງລຸ່ມ).

## ຮູບທີ 1. ຕົວຢ່າງຕາຕະລາງວຽກເຮືອນ

**ຕາຕະລາງວຽກເຮືອນຂອງຄອບຄົວກາເຊຍ**

| ວຽກເຮືອນ | ວັນຈັນ | ວັນອັງຄານ | ວັນພຸດ | ວັນພະຫັດ | ວັນສຸກ | ວັນເສົາ | ວັນອາທິດ |
|---|---|---|---|---|---|---|---|
| Vacuum (ດູດຝຸ່ນ) | | | ຄາເມນ | | | | |
| Do the laundry (ຊັກເສື້ອຜ້າ) | | | | | ພໍ່ | | |
| Do the dishes (ລ້າງຖ້ວຍ) | ຄາເມນ | ມາໂຄ | ແມ່ | ມາໂຄ | ຄາເມນ | ພໍ່ | ພໍ່ |
| Set the table (ຈັດໂຕະ) | ມາໂຄ | ຄາເມນ | ພໍ່ | ຄາເມນ | ມາໂຄ | ແມ່ | ແມ່ |
| Clean your room (ອະນາໄມຫ້ອງຂອງເຈົ້າ) | | | | ຄາເມນ | ມາໂຄ | | |
| Take out the garbage (ເອົາຂີ້ເຫຍື້ອໄປຖິ້ມ) | | | ມາໂຄ | | | | |

## ຝຶກທັກສະການເວົ້າໂດຍຖາມ ແລະ ຕອບຄໍາຖາມກ່ຽວກັບອະນາຄົດ

ຖາມ ແລະ
ຕອບຄໍາຖາມດັ່ງງເປັນພາສາອັງກິດເພື່ອຕັດສິນວ່າຜູ້ໃດຈະຮັບຜິດຊອບສໍາລັບວຽກເຮືອນແຕ່ລະຢ່າງ.

- **ຖາມ:** Who will take out the garbage this week? (ຜູ້ໃດຈະເອົາຂີ້ເຫຍື້ອໄປຖິ້ມໃນອາທິດນີ້?)
- **ຕອບ:** I will do it on Wednesday. (ຂ້ອຍຈະເຮັດໃນວັນພຸດ.)

- **ຖາມ:** Who will do the dishes on Monday? (ຜູ້ໃດຈະລ້າງຖ້ວຍໃນວັນຈັນ?)
- **ຕອບ:** I will do them. (ຂ້ອຍຈະເຮັດ.)

## ປະເດັນໄວຍະກອນທີ່ສໍາຄັນ: ລະຫວ່າງ "Will" ແລະ "Going To"

ທັງ "will" ແລະ "going to" ແມ່ນຖືກນໍາໃຊ້ເພື່ອເວົ້າກ່ຽວກັບການກະທໍາໃນອະນາຄົດ. ເຖິງຢ່າງໃດກໍຕາມ, ພວກມັນຖືກໃຊ້ໃນສະຖານະການທີ່ແຕກຕ່າງກັນ.

### ເມື່ອໃດຄວນໃຊ້ "Will"

ເພື່ອອະທິບາຍການກະທໍາໃນອະນາຄົດໃນເວລາທີ່ເວົ້າ, ໃຫ້ໃຊ້ "will." ຕົວຢ່າງ:

- **ບຸກຄົນທີ 1:** Who will wash the dishes on Monday? (ຜູ້ໃດຈະລ້າງຖ້ວຍໃນວັນຈັນ?)
- **ບຸກຄົນທີ 2:** I will. (ຂ້ອຍຈະເຮັດ.)
- **ບຸກຄົນທີ 1:** Great! Let's write your name down on the chart. (ດີຫຼາຍ! ພວກເຮົາຈະຂຽນຊື່ຂອງເຈົ້າໃສ່ຕາຕະລາງ.)

### ເມື່ອໃດຄວນໃຊ້ "Going To"

ເພື່ອອະທິບາຍແຜນການໃນອະນາຄົດທີ່ມີການຕັດສິນໃຈແລ້ວກ່ອນເວລາເວົ້າ, ໃຫ້ໃຊ້ "going to." ຕົວຢ່າງ:

- **ບຸກຄົນທີ 1:** Who is going to set the table tonight? (ຜູ້ໃດຈະຈັດໂຕະໃນຄືນນີ້?)
- **ບຸກຄົນທີ 2:** I'm not sure. Let's look at the chart. Marco is going to set the table tonight. (ຂ້ອຍບໍ່ແນ່ໃຈ. ພວກເຮົາຕ້ອງເບິ່ງຕາຕະລາງ. ມາໂຄຈະຈັດໂຕະໃນຄືນນີ້.)

ທ່ານຄວນໃຊ້ຫຍັງເມື່ອຕື່ມຂໍ້ມູນໃສ່ຕາຕະລາງວຽກເຮືອນ?
ຍ້ອນຕ້ອງຕັດສິນໃຈວຽກເຮືອນໃນເວລາທີ່ທ່ານກໍາລັງຕື່ມຂໍ້ມູນ ແລະ ສົນທະນາກ່ຽວກັບຕາຕະລາງວຽກເຮືອນ, "will" ຖືກນໍາໃຊ້ເພື່ອສົນທະນາກ່ຽວກັບການກະທໍາເຫຼົ່ານີ້ໃນອະນາຄົດ.

ຫຼັງຈາກທີ່ທ່ານຕື່ມຂໍ້ມູນໃສ່ຕາຕະລາງວຽກເຮືອນແລ້ວ, ທ່ານ ແລະ ລູກຂອງທ່ານ ຫຼື ໄວໜຸ່ມສາມາດສືບຕໍ່ໃຊ້ຕາຕະລາງດັ່ງກ່າວເພື່ອຝຶກເວົ້າ. ເຖິງຢ່າງໃດກໍຕາມ, ຍ້ອນຕາຕະລາງສະແດງແຜນການໃນອະນາຄົດທີ່ມີການຕັດສິນໃຈໄວ້ແລ້ວ, ໃຫ້ໃຊ້ "going to" ແທນ "will." ໃຫ້ໃຊ້ໂຄງສ້າງປະໂຫຍກຂ້າງລຸ່ມເພື່ອຝຶກໃຊ້ "going to" ເມື່ອກໍາລັງເວົ້າກ່ຽວກັບວຽກເຮືອນ.

## ໂຄງສ້າງປະໂຫຍກເພື່ອເວົ້າກ່ຽວກັບແຜນການໃນອະນາຄົດສໍາລັບວຽກເຮືອນ

**ຄໍາຖາມ**

- Who is going to _____ this week? (ຜູ້ໃດຈະ _____ ໃນອາທິດນີ້?)

**ຕົວຢ່າງ**

- Who is going to **do the laundry** this week? (ຜູ້ໃດຈະ**ຊັກເສື້ອຜ້າ**ໃນອາທິດນີ້?)
- Who is going to **take out the garbage** this week?
(ຜູ້ໃດຈະ**ເອົາຂີ້ເຫຍື້ອໄປຖິ້ມ**ໃນອາທິດນີ້?)

**ຕອບ**

- _________ is going to _______ on ________. (_________ ຈະ _______ ໃນ ________

**ຕົວຢ່າງ**

- **Dad** is going to **do the laundry** on **Friday**. (**ພໍ່**ຈະ**ຊັກເສື້ອຜ້າ**ໃນ**ວັນສຸກ**.)
- **Marco** is going to **take out the trash** on **Wednesday**.
(**ມາໂຄ**ຈະ**ເອົາຂີ້ເຫຍື້ອໄປຖິ້ມ**ໃນ**ວັນພຸດ**.)

## ຝຶກທັກສະການເວົ້າໂດຍຖາມ ແລະ ຕອບຄໍາຖາມກ່ຽວກັບອະດີດ

ທ່ານ ແລະ ລູກຂອງທ່ານ ຫຼື
ໄວໜຸ່ມຍັງສາມາດໃຊ້ຕາຕະລາງວຽກເຮືອນເພື່ອບັນທຶກວຽກເຮືອນເມື່ອເຮັດພວກມັນສໍາເລັດ.
ໃນຕົວຢ່າງຂ້າງລຸ່ມ, ເຄື່ອງໝາຍ “x” ສະແດງວຽກເຮືອນທີ່ເຮັດແລ້ວ.

IOWA READING RESEARCH CENTER

**Student Reading Success Through Research and Collaboration**

**ຕາຕະລາງວຽກເຮືອນຂອງຄອບຄົວກາເຊຍ**

| ວຽກເຮືອນ | ວັນຈັນ | ວັນອັງຄານ | ວັນພຸດ | ວັນພະຫັດ | ວັນສຸກ | ວັນເສົາ | ວັນອາທິດ |
|---|---|---|---|---|---|---|---|
| Vacuum (ດູດຝຸ່ນ) | | | x ຄາເມນ | | | | |
| Do the laundry (ຊັກເສື້ອຜ້າ) | | | | | ພໍ່ | | |
| Do the dishes (ລ້າງຖ້ວຍ) | x ຄາເມນ | x ມາໂຄ | ແມ່ | ມາໂຄ | ຄາເມນ | ພໍ່ | ພໍ່ |
| Set the table (ຈັດໂຕະ) | x ມາໂຄ | x ຄາເມນ | ພໍ່ | ຄາເມນ | ມາໂຄ | ແມ່ | ແມ່ |
| Clean your room (ອະນາໄມຫ້ອງຂອງເຈົ້າ) | | | | ຄາເມນ | ມາໂຄ | | |
| Take out the garbage (ເອົາຂີ້ເຫຍື້ອໄປຖິ້ມ) | | | x ມາໂຄ | | | | |

ໃຫ້ຂີດຂ້າວຽກເຮືອນທີ່ສໍາເລັດແລ້ວກັບລູກຂອງທ່ານ ຫຼື ໄວໜຸ່ມ. ຝຶກຖາມ ແລະ ຕອບຄໍາຖາມກ່ຽວກັບວຽກເຮືອນທີ່ສໍາເລັດແລ້ວ

- **ຖາມ:** Did Marco do the dishes on Monday? (ມາໂຄໄດ້ລ້າງຖ້ວຍໃນວັນຈັນບໍ?)
- **ຕອບ:** Yes, he did. (ແມ່ນ, ລາວເຮັດແລ້ວ.)

- **ຖາມ:** Has Carmen cleaned her room? (ຄາເມນໄດ້ອະນາໄມຫ້ອງຂອງລາວບໍ?)
- **ຕອບ:** No. She is going to clean it on Thursday. (ບໍ່. ລາວຈະອະນາໄມຫ້ອງໃນວັນພະຫັດ.)

## ປະເດັນໄວຍະກອນທີ່ສຳຄັນ: ລະຫວ່າງ "ອະດີດ" ແລະ "ປັດຈຸບັນສົມບູນ"

ສາມາດໃຊ້ທັງກາລະອະດີດ ແລະ ກາລະປັດຈຸບັນສົມບູນເພື່ອລົມກ່ຽວກັບວຽກເຮືອນທີ່ເຮັດແລ້ວ ໂດຍຂຶ້ນກັບສະຖານະການ.

### ເມື່ອໃດຄວນໃຊ້ກາລະອະດີດ

ໃຫ້ໃຊ້ກາລະອະດີດກັບການກະທຳທີ່ສຳເລັດແລ້ວ ໂດຍບໍ່ມີຜົນໃນປັດຈຸບັນ. ຕົວຢ່າງ:

- **ບຸກຄົນທີ 1:** Did Carmen vacuum? (ຄາເມນໄດ້ດູດຝຸ່ນບໍ?)
- **ບຸກຄົນທີ 2:** Yes, she did. (ແມ່ນ, ລາວເຮັດແລ້ວ.)

ໃຊ້ກາລະອະດີດ ເມື່ອກຳລັງລະບຸຂໍ້ມູນສະເພາະກ່ຽວກັບເວລາທີ່ການກະທຳຖືກເຮັດໃຫ້ສຳເລັດ. ຕົວຢ່າງ:

- **ບຸກຄົນທີ 1:** Did Carmen vacuum? (ຄາເມນໄດ້ດູດຝຸ່ນບໍ?)
- **ບຸກຄົນທີ 2:** Yes, she vacuumed on Wednesday. (ແມ່ນ, ລາວດູດຝຸ່ນໃນວັນພຸດ.)

### ເມື່ອໃດຄວນໃຊ້ກາລະປັດຈຸບັນສົມບູນ

ໃຫ້ໃຊ້ກາລະປັດຈຸບັນສົມບູນກັບການກະທຳທີ່ເຮັດສຳເລັດແລ້ວພ້ອມທັງມີຜົນໃນປັດຈຸບັນ. ຕົວຢ່າງ:

- **ບຸກຄົນທີ 1:** Has Marco set the table? (ມາໂຄໄດ້ຈັດໂຕະແລ້ວບໍ?
- **ບຸກຄົນທີ 2:** Yes, he has. Now we can serve dinner. (ແມ່ນ, ລາວໄດ້ເຮັດແລ້ວ. ຕອນນີ້ ພວກເຮົາສາມາດຈັດອາຫານແລງ.)

ໃຫ້ໃຊ້ກາລະປັດຈຸບັນສົມບູນກັບຄຳສັບເວລາທີ່ຍັງບໍ່ທັນສຳເລັດ. ຕົວຢ່າງ:

- **ບຸກຄົນທີ 1:** Has Carmen cleaned her room? (ຄາເມນໄດ້ອະນາໄມຫ້ອງຂອງລາວແລ້ວບໍ?)
- **ບຸກຄົນທີ 2:** No, she hasn't. She is going to clean it on Thursday. (ບໍ່, ລາວຍັງບໍ່ໄດ້ເຮັດ. ລາວຈະອະນາໄມຫ້ອງໃນວັນພະຫັດ.)

ວຽກເຮືອນບໍ່ໄດ້ເປັນສິ່ງທີ່ມ່ວນຊື່ນຢູ່ສະເໝີ. ແຕ່ການເວົ້າກ່ຽວກັບວຽກເຮືອນກັບລູກຂອງທ່ານ ແລະ ໄວໜຸ່ມເປັນວິທີການທີ່ດີຫຼາຍທີ່ຈະຝຶກຝົນທັກສະດ້ານພາສາອັງກິດຂອງທ່ານ.

## ແຫຼ່ງຊ່ວຍເຫຼືອເສີມສຳລັບຄອບຄົວ

[ຕາຕະລາງວຽກເຮືອນ]

ໃຊ້ແມ່ແບບນີ້ເພື່ອລະບຸວຽກເຮືອນໃນແຕ່ລະອາທິດທີ່ຈະຕ້ອງເຮັດ ເຊິ່ງບົ່ງບອກວ່າສະມາຊິກຄົນໃດໃນຄອບຄົວທີ່ຈະເຮັດວຽກເຮືອນແຕ່ລະຢ່າງ ແລະ ພວກເຂົາຈະເຮັດໃຫ້ວຽກເຮືອນແຕ່ລະຢ່າງໃຫ້ສຳເລັດມື້ໃດ ແລະ ສົນທະນາກັບຄອບຄົວເມື່ອທ່ານຝຶກຝົນທັກສະດ້ານພາສາອັງກິດ.

## ແຫຼ່ງອ້າງອີງ

Kim, Y. (2008). ການປະກອບສ່ວນຂອງໜ້າວຽກເຮັດຮ່ວມກັນ ແລະ ໜ້າວຽກລາຍບຸກຄົນເພື່ອຮຽນຮູ້ຄຳສັບ L2. *ວາລະສານພາສາສະໄໝໃໝ່*, *92*, 114–130. http://www.jstor.org/stable/25172996